BURAPHA
AGRO-FORESTRY

ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ເປັນບໍລິສັດປູກໄມ້ ແລະ ຜະລິດຕະພັນໄມ້ຂອງປະເທດສະວີເດັນ/ລາວ ທີ່ມີໂຮງງານໄມ້ອັດ, ໂຮງເລື່ອຍ ແລະ ສວນປູກໄມ້ເປັນຂອງຕົນເອງ. ບໍລິສັດໄດ້ສ້າງຕັ້ງຂຶ້ນໃນປີ 1994 ໂດຍມີເປົ້າໝາຍ ເພື່ອພັດທະນາແຫຼ່ງປູກໄມ້ໃນ ສປປ ລາວ ໃຫ້ກວ້າງຂວາງພໍສົມຄວນ ເປັນແຫຼ່ງສະໜອງໄມ້ຕົ້ນຕໍໃຫ້ແກ່ການດຳເນີນທຸລະກິດດ້ານອຸດສາຫະກຳໄມ້ທີ່ສຳຄັນ. ໃນປະຈຸບັນ ບໍລິສັດ ບົວລະພາ ໄດ້ດຳເນີນການຜະລິດຜະລິດຕະພັນໄມ້, ມີໂຮງເລື່ອຍ/ເຟີນີເຈີ ພ້ອມທັງມີໂຮງງານໄມ້ອັດທີ່ໄດ້ເລີ່ມຜະລິດນັບແຕ່ປີ 2021.

## ຊ່າງໄຟຟ້າ - ຫຼາຍຕຳແໜ່ງ

ສະຖານທີ່ເຮັດວຽກ: ໂຮງງານໄມ້ອັດ ທີ່ເມືອງຫີນເຫີບ, ແຂວງວຽງຈັນ

ຕຳແໜ່ງນີ້ແມ່ນລາຍງານວຽກຫາຫົວໜ້າຄຸມງານຝ່າຍສ້ອມບຳລຸງ, ທ່ານມີໜ້າທີ່ຮັບຜິດຊອບປະຕິບັດວຽກສ້ອມແປງ ແລະ ບຳລຸງຮັກສາອຸປະກອນເຄື່ອງມື ການຜະລິດທັງໝົດໃນໂຮງງານໄມ້ອັດ ດ້ວຍວິທີທີ່ປອດໄພ.

ໂຮງງານໄມ້ອັດດຳເນີນການຜະລິດ 24 ຊົ່ວໂມງຕໍ່ມື້, ເຊິ່ງຕຳແໜ່ງນີ້ຕ້ອງໄດ້ເຮັດວຽກທັງກະກາງເວັນ ແລະ ກະກາງຄືນໝູນວຽນກັນຄື ເຮັດ 12 ຊົ່ວໂມງຕໍ່ມື້, ສະເລ່ຍ 4 ມື້ຕໍ່ອາທິດ.

### ໜ້າທີ່ຮັບຜິດຊອບຫຼັກ

- ບຳລຸງຮັກສາເຄື່ອງຈັກ ຕົ້ນຕໍແມ່ນອີງປະກອບກ່ຽວກັບໄຟຟ້າ ຕາມຄຳແນະນຳຂອງຫົວໜ້າສາຍງານສ້ອມບຳລຸງ
- ປະຕິບັດຕາມຂັ້ນຕອນການປະຕິບັດມາດຕະຖານ ແລະ ຄູ່ມືນຳໃຊ້ ເຊັ່ນດຽວກັນກັບຂັ້ນຕອນດ້ານຄວາມປອດໄພ
- ດຳເນີນການສອ້ມແປງໄຟຟ້າ ແລະ ບຳລຸງຮັກສາ ເພື່ອເພີ່ມປະສິດທິພາບການເຮັດວຽກຂອງເຄື່ອງຈັກ ແລະ ເຄື່ອງມືອຸປະກອນ
- ລາຍງານ ແລະ ບັນທຶກບັນຫາ ແລະ ບັນຫາດ້ານເຕັກນິກ ແລະ ແກ້ໄຂໃຫ້ທັນເວລາ
- ດຳເນີນການບຳລຸງຮັກສາລະບົບໄຟຟ້າຂອງ ເຄື່ອງຈັກ, ອຸປະກອນ, ເຄື່ອງມື ແລະ ລະບົບຢ່າງລະອຽດ
- ທຳຄວາມສະອາດ ແລະ ຮັກສາອົງປະກອບໄຟຟ້າຂອງ PLC, ແຜງສະວິດ ແລະ ຕູ້ສາຍໄຟ
- ລາຍງານບັນຫາ, ຂໍ້ບົກຜ່ອງໃຫ້ຫົວໜ້າສາຍງານສ້ອມບຳລຸງ

### ຄຸນະສົມບັດ / ທັກສະທີ່ຕ້ອງການ

- ລະດັບການສຶກສາຈາກວິທະຍາໄລອະຊີວະສຶກສາ ຫຼັກສູດໄຟຟ້າ (ອາຄານ, ເຄື່ອງຈັກ, ການຄວບຄຸມແລະ/ຫລື PLCs ) ຫຼື ສາຂາທີ່ກ່ຽວຂ້ອງ
- ປະສົບການທີ່ຜ່ານມາເປັນຊ່າງໄຟຟ້າ ຢູ່ໃນໂຮງງານອຸດສາຫະກຳຂະໜາດໃຫຍ່
- ມີຄວາມຮູ້ຄວາມຊຳນານ ກ່ຽວກັບອຸປະກອນໂຮງງານ ລວມທັງ ປໍ້າ, ລະບົບໄຮໂດລິກ, ນິວເມຕິກ, ສາຍພານ, ມໍເຕີ, ປໍ້າລົມ ແລະ ສ່ວນປະກອບຂອງມັນ
- ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຂັ້ນຕອນຄວາມປອດໄພ ແລະ ກຳນົດຄວາມສ່ຽງ/ອັນຕະລາຍໃນໂຮງງານອຸດສາຫະກຳ
- ຄວາມຮູ້ພື້ນຖານກ່ຽວກັບ PLCs, motor rewinding, load testing
- ຄວາມຊຳນິຊຳນານໃນການໃຊ້ເຄື່ອງມືສ້ອມແປງຫຼາຍຊະນິດ

BURAPHA
AGRO-FORESTRY

- ມີທັກສະການສື່ສານທາງວາຈາ ແລະ ການຂຽນພາສາລາວໄດ້ດີ, ຖ້າມີທັກສະໃນພາສາອັງກິດຈະເປັນການດີ
- ມັກເຮັດວຽກເປັນທີມ
- ມີຄວາມສາມາດແກ້ໄຂບັນຫາ ແລະ ວິເຄາະໄດ້ດີ, ໃສ່ໃຈໃນລາຍລະອຽດ
- ມີຄວາມເຕັມໃຈທີ່ຈະຮຽນຮູ້ ແລະ ປະຕິບັດຕາມຄຳແນະນຳໄດ້ຢ່າງຊັດເຈນ
- ມີຄວາມກະຕືລືລົ້ນ ແລະ ມີໄຫວພິບ ທີ່ສາມາດເຮັດວຽກພາຍໃຕ້ຄວາມກົດດັນໄດ້ດີ

ບໍລິສັດຂອງພວກເຮົາສະເໜີຄ່າຕອບແທນທີ່ສົມເຫດສົມຜົນ ແລະ ມີສະພາບແວດລ້ອມການເຮັດວຽກທີ່ຊ່ວຍເຫລືອສະໜັບສະໜູນເຊິ່ງກັນ ແລະ ກັນ.

ຖ້າຫາກທ່ານໃດສົນໃຈ ກະລຸນາສົ່ງຊີວະປະຫວັດ, ເອກະສານຢັ້ງຢືນການສຶກສາ ມາທີ່ອີເມວ recruitment@buraphawood.com ຫຼື ຢູ່ສຳນັກງານໃຫຍ່ ທີ່ບ້ານໂພນໄຊ (ຕຶກໄຟແດງປະຕູໄຊ), ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ຫຼື ທີ່ໂຮງງານໄມ້ອັດບົວລະພາ ທີ່ບ້ານຄອນພຸກ, ເມືອງ ຫີນເຫີບ, ແຂວງວຽງຈັນ

ຫຼື ໂທສອບຖາມໄດ້ທີ່ເບີ: **020 5498 8643**

ມີພຽງຜູ້ສະໝັກທີ່ຜ່ານການຄັດເລືອກເທົ່ານັ້ນ ທີ່ຈະຖືກເອີ້ນສຳພາດ.

**ປິດຮັບສະໝັກວັນທີ 31 ຕຸລາ 2023**